ບໍລິສັດ ລາວອາໂກຣເທັກ ມະຫາຊົນ

# ເອກະສານລາຍງານການເງິນລວມໂດຍຫຍໍ້ ( ທົບທວນຄືນ )

ສໍາລັບໄຕມາດ 01 ປີ 2019

*ສາລະບານ* | *ໜ້າ*


| | |
|---|---|
| ໃບລາຍງານຖານະການເງິນ | 1 |
| ໃບລາຍງານຜົນໄດ້ຮັບ | 2 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 3 |
| ໃບລາຍງານກະແສເງິນສົດ | 4 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້ | 5-12 |

**ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ**

**ໃບລາຍງານຖານະການເງິນ**

**ສິ້ນສຸດ ວັນທີ 31 ມີນາ 2019**

| | ບົດອະທິບາຍ | ທົບທວນຄືນ 31 ມີນາ 2019 ກີບ | ກວດສອບ 31 ທັນວາ 2018 ກີບ |
|---|---|---|---|
| ຊັບສິນ | | | |
| ຊັບສິນໝູນວຽນ | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | 3,147,036,106 | 4,823,430,665 |
| ໜີ້ຕ້ອງຮັບການຄ້າ, ສຸດທິ | | 16,590,185,270 | 16,577,627,158 |
| ໜີ້ຕ້ອງຮັບອື່ນໆ | | 463,594,000 | - |
| ເຄື່ອງໃນສາງ, ສຸດທິ | | 2,282,690,870 | 865,481,946 |
| ວັດສະດຸສະໜອງ, ສຸດທິ | | 1,301,797,312 | 906,316,624 |
| ຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ | | 2,379,919,756 | 1,999,044,052 |
| ຊັບສິນໝູນວຽນອື່ນໆ | | 1,978,812,043 | 1,794,965,888 |
| ລວມຊັບສິນໝູນວຽນ | | 28,144,035,357 | 26,966,866,333 |
| ຊັບສິນບໍ່ໝູນວຽນ | | | |
| ຊັບສົມບັດຄົງທີ່ ມີຕົວຕົນ, ສຸດທິ | 5 | 20,151,673,282 | 20,280,020,977 |
| ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ | 6 | 22,554,218,164 | 22,507,458,490 |
| ລວມຊັບສິນບໍ່ໝູນວຽນ | | 42,705,891,446 | 42,787,479,467 |
| ລວມຊັບສິນ | | 70,849,926,803 | 69,754,345,800 |
| ໜີ້ສິນ ແລະ ທຶນເຈົ້າຂອງ | | | |
| ໜີ້ສິນ | | | |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | 9,534,144,864 | 9,218,844,391 |
| ໜີ້ສິນໝູນວຽນອື່ນໆ | | 433,384,338 | 367,107,838 |
| ເງິນກູ້ຢືມໄລຍະສັ້ນ | 7 | 1,355,822,940 | 426,674,639 |
| ລວມໜີ້ສິນ | | 11,323,352,142 | 10,012,626,868 |
| ທຶນເຈົ້າຂອງ | | | |
| ທຶນຈົດທະບຽນ | | 50,000,000,000 | 50,000,000,000 |
| ສ່ວນເພີ່ມຂອງມູນຄ່າຮຸ້ນ | | 3,269,466,406 | 3,269,466,406 |
| ກຳໄລສະສົມ | | - | - |
| ຄັງສະສົມຕາມລະບຽບການ | | 887,496,413 | 887,496,413 |
| ກຳໄລສະສົມລໍຖ້າແບ່ງປັນ | | 5,369,611,842 | 5,584,756,113 |
| ລວມທຶນເຈົ້າຂອງ | | 59,526,574,661 | 59,741,718,932 |
| ລວມໜີ້ສິນ ແລະ ທຶນເຈົ້າຂອງ | | 70,849,926,803 | 69,754,345,800 |

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 14 ພຶດສະພາ 2019

ທ່ານ ວັນສະເຫຼີມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 14 ພຶດສະພາ 2019

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

**ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ**

**ໃບລາຍງານຜົນໄດ້ຮັບ**

**ສຳລັບໄລຍະ 3 ເດືອນສິ້ນສຸດ 31 ມີນາ 2019**

| | | ທົບທວນຄືນ<br>31 ມີນາ 2019 |
|---|---|---|
| | ບົດອະທິບາຍ | ກີບ |
| ລາຍຮັບຈາກການຂາຍ ແລະ ການບໍລິການ | | 14,643,544,971 |
| ຕົ້ນທຶນໃນການຂາຍ ແລະ ການບໍລິການ | | (13,064,543,465) |
| **ກຳໄລ ລວມ** | | **1,579,001,506** |
| ລາຍຈ່າຍການຂາຍ ແລະ ບໍລິຫານ | | (1,723,552,321) |
| ລາຍຮັບອື່ນໆ | | 112,880 |
| ຂາດທຶນ/ກຳໄລ ຈາກອັດຕາແລກປ່ຽນ | | (70,706,337) |
| **ກຳໄລຈາກການດຳເນີນງານ** | | **(215,144,271)** |
| ອາກອນກຳໄລ | | - |
| **ກຳໄລສຸດທິສຳລັບງວດ** | | **(215,144,271)** |
| **ກຳໄລຕໍ່ຮຸ້ນ** | | |
| ກຳໄລສຸດທິຕໍ່ຮຸ້ນ | 8 | (2.15) |

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 14 ພຶດສະພາ 2019

ທ່ານ ວັນສະເຫຼີມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 14 ພຶດສະພາ 2019

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

## ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ
## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
## ສໍາລັບໄລຍະ 3 ເດືອນສິ້ນສຸດ 31 ມີນາ 2019

| | ທຶນຈົດທະບຽນ | ສ່ວນເພີ່ມມູນຄ່າຮຸ້ນ | ກໍາໄລສະສົມ | | ລວມ |
|---|---|---|---|---|---|
| | | | ຄັງສະສົມຕາມລະບຽບການ | ກໍາໄລສະສົມ ລໍຖ້າແບ່ງປັນ | |
| | ກີບ | ກີບ | ກີບ | ກີບ | ກີບ |
| **ຍອດຍົກມາ ໃນວັນທີ 01 ມັງກອນ 2019** | 50,000,000,000 | 3,269,466,406 | 887,496,413 | 5,584,756,113 | 59,741,718,932 |
| ທຶນຈົດທະບຽນ | - | - | - | - | - |
| ສ່ວນເພີ່ມມູນຄ່າຮຸ້ນ | - | - | - | - | - |
| ກໍາໄລ/ຂາດ ສຸດທິໃນປີ | - | - | - | (215,144,271) | (215,144,271) |
| ຄັງສະສົມຕາມລະບຽບການ | - | - | - | - | - |
| **ຍອດເຫຼືອທ້າຍປີ ວັນທີ 31 ມີນາ 2019** | **50,000,000,000** | **3,269,466,406** | **887,496,413** | **5,369,611,842** | **59,526,574,661** |

ອຸດສາຫະກໍາ ແລະ ການຄ້າ ກະຊວງ ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company ນະຄອນ ຫຼວງ

ທ່ານ ອຸດົມ ແກ້ວທະວົງ
ຜູ້ອໍານວຍການ
ວັນທີ: 14 ພຶດສະພາ 2019

ທ່ານ ວັນສະເຫຼີມ ສີສຸດຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 14 ພຶດສະພາ 2019

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

## ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ

## ໃບລາຍງານກະແສເງິນສົດ

## ສຳລັບໄລຍະ 3 ເດືອນສິ້ນສຸດ 31 ມີນາ 2019

| | ບົດອະທິບາຍ | ທົບທວນຄືນ<br>31 ມີນາ 2019<br>ກີບ |
|---|---|---|
| **ກະແສເງິນສົດຈາກກິດຈະກຳດຳເນີນງານ** | | |
| ເງິນສົດຈາກການດຳເນີນງານ | 9 | (1,815,961,281) |
| ດອກເບ້ຍ | | |
| ອາກອນລາຍໄດ້ | | - |
| **ເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **(1,815,961,281)** |
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | |
| ຊື້ຊັບສິນບັດຄົງທີ່ | | (466,945,800) |
| ຊື້ຊັບສິນບັດຄົງທີ່ ບໍ່ມີຕົວຕົນ | | |
| ຈ່າຍຄ່າຕົ້ນທຶນການປູກປາມ | | (251,929,441) |
| **ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ** | | **(718,875,241)** |
| **ກະແສເງິນສົດຈາກກິດຈະກຳປະກອບທຶນ** | | |
| ເງິນສົດຮັບຈາກການອອກຮຸ້ນສາມັນ | | |
| ເງິນສົດຮັບຈາກການກູ້ຢືມ | 7 | 929,148,300 |
| **ເງິນສົດໃຊ້ສຸດທິໃນກິດຈະກຳການເງິນ** | | **929,148,300** |
| **ເພີ່ມຂຶ້ນ/(ຫຼຸດລົງ)ສຸດທິ ຂອງເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | **(1,605,688,222)** |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ | | 4,823,430,665 |
| ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນໃນ | | (70,706,337) |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທ້າຍງວດ** | | **3,147,036,106** |
| ໜີ້ຕ້ອງສົ່ງຈາກການຊື້ຊັບສິນບັດຄົງທີ່ ມີຕົວຕົນ | | 1,202,418,205 |

ກະຊວງ ອຸດສາຫະກຳ ແລະ ການຄ້າ ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company ນະຄອນຫຼວງວຽງຈັນ

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 14 ພຶດສະພາ 2019

ທ່ານ ວັນສະຫຼຸ້ມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 14 ພຶດສະພາ 2019

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

## 1 ຂໍ້ມູນທົ່ວໄປ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດ ມະຫາຊົນ ທີ່ສ້າງຕັ້ງຂຶ້ນ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").
ມີສໍານັກງານຈົດທະບຽນຕັ້ງຢູ່ ບ້ານ: ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ,

ກິດຈະກໍາຫຼັກຂອງບໍລິສັດ ແມ່ນອຸດສາຫະກໍານໍ້າມັນປາມເຊິ່ງເລີ່ມຈາກການເພາະປູກເບ້ຍຕົ້ນປາມ (Palm), ປູກຕົ້ນປາມ, ຜະລິດ ແລະ ຈໍາໜ່າຍຜະລິດຕະພັນປາມໂດຍບໍລິສັດເອງ, ນອກຈາກນີ້ບໍລິສັດຍັງສະໜອງເບ້ຍຕົ້ນປາມໃຫ້ປະຊາຊົນ ສໍາລັບການເພາະປູກ ແລະ ເກັບຊື້ຄືນໝາກປາມ.

ນອກຈາກນີ້ ບໍລິສັດ ຍັງໄດ້ນໍາເຂົ້າສິນຄ້າສໍາເລັດຮູບ ເຊັ່ນນໍ້າມັນປຸງແຕ່ງອາຫານ ແລະ ນໍ້າໝາກພ້າວ ຈາກປະເທດໄທ ເພື່ອມາຈໍາໜ່າຍໃນ ສປປ ລາວ.

ເອກະສານລາຍງານການເງິນສະບັບນີ້ ໄດ້ຮັບການເຫັນອະນຸມັດໂດຍສະພາບໍລິຫານຂອງບໍລິສັດຄັ້ງວັນທີ 14 ພຶດສະພາ 2019,

## 2 ນະໂຍບາຍການບັນຊີ

ນະໂຍບາຍການບັນຊີ ທີ່ນໍາໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນສະບັບນີ້ໄດ້ກໍານົດໄວ້ ດັ່ງລຸ່ມນີ້:

### 2.1 ພື້ນຖານໃນການກະກຽມ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ນຍ ລົງວັນທີ 26 ທັນວາ 2013. ວິສາຫະກິດ ທີ່ບໍ່ໄດ້ຮັບໃຊ້ຜົນປະໂຫຍດສາທາລະນະລັດ ຕ້ອງປະຕິບັດມາດຕະຖານການລາຍງານການເງິນສໍາລັບ ວິສາຫະກິດ ທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ (LFRS), ມາດຕະຖານທີ່ບັງຄັບໃຊ້ຂຶ້ນຢູ່ກັບຂະໜາດຂອງກິດຈະ ການ, ເຊິ່ງອາດເປັນວິສາຫະກິດຂະໜາດໃຫຍ່, ຂະໜາດນ້ອຍ ແລະ ຂະໜາດກາງ. LFRS ແມ່ນມີຜົນບັງຄັບໃຊ້ສໍາລັບໄລຍະປະຈໍາປີເລີ່ມ ຫລື ວັນທີ 01 ມັງກອນ 2017 ຕາມປະກາດແຈ້ງການໂດຍຜ່ານ ການຕັດສິນຂອງລັດຖະມົນຕີ ກ່ຽວກັບການຮັບຮອງເອົາມາດຕະຖານລາຍງານການເງິນສໍາລັບວິສະຫາກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ສະບັບເລກທີ 530/ກງ ອອກໃນວັນທີ 26 ກຸມພາ 2016.

## 2.1 ພື້ນຖານໃນການກະກຽມ ( ຕໍ່ )

ກະຊວງການເງິນໄດ້ຜ່ອນຜັນໃຫ້ວິສະຫະກິດນໍາໃຊ້ LFRS ໃນລະຫວ່າງ ປີ2017. ນັບຕັ້ງແຕ່ 2019 ຍັງເປັນໄລຍະການປ່ຽນແປງ, ເຈົ້າໜ້າທີ່ສ່ວຍສາອາກອນຍັງຕ້ອງການວິສະຫະກິດຮັກສາວິທີປະຕິບັດໃນການເກັບອາ ກອນຄືປີຜ່ານມາ.

ຕາມທີ່ບໍລິສັດ ໄດ້ຮັກສາ ແລະ ສືບຕໍ່ປະຕິບັດນະໂຍບາຍການບັນຊີຂອງບໍລິສັດໃນປີຜ່ານມາ ເຊິ່ງອາດແຕກຕ່າງຈາກ LFRS ຄວາມແຕກຕ່າງເຫລົ່ານີ້ ອາດລວມເຖິງຫລາຍເລື່ອງ ເຊັ່ນ: ການຮັບຮູ້ລາຍຮັບ, ຊັບສິນຄົງທີ່, ອາກອນລາຍໄດ້, ຜົນປະໂຫຍດຂອງພະນັກງານ ແລະ ກະສິກໍາ. ດັ່ງນັ້ນ. ຜູ້ນໍາໃຊ້ເອກະສານລາຍງານການເງິນລວມຄວາມຮັບຮູ້ ແລະ ສາມາເຂົ້າໃຈຄວາມແຕກຕ່າງດັ່ງກ່ວາ ແລະ ວິທີເຫຼົ່ານີ້ອາດມີຜົນກະທົບຕໍ່ການຕີຄວາມຂອງເອກະສານລາຍງານການເງິນລວມ ແລະ ການຕັດສິນໃຈຂອງພວກເຂົາ. ໃນການສ້າງເອກະສານການເງິນລວມໄດ້ກໍານົດອອກໂດຍຜູ້ບໍລິຫານ ເຊິ່ງບໍລິຫານໄດ້ສ້າງການຄາດຄະເນ ແລະ ສົມມຸດຖານຫລາຍປະການເພື່ອສະແດງເຖິງຜົນກະທົບຕໍ່ມູນຄ່າຂອງສັບສິນ ແລະ ໜີ້ສິນ ທີ່ໄດ້ລາຍງານການເປີດເຜີຍຂໍ້ມູນຊັບສິນ ແລະ ໜີ້ສິນທີ່ອາດຈະເກີດຂຶ້ນໃນມື້ສ້າງເອກະສານລາຍງານການເງິນລວມ ແລະ ຈໍານວນເງິນ ລາຍຮັບ ແລະ ລາຍຈ່າຍໃນຮອບເວລາທີ່ລາຍງານ. ສະນັ້ນຕົວເລກຄາດຄະເນປະຕິບັດດັ່ງກ່າວຕ້ອງສ້າງບົນພື້ນຖານຄວາມຮູ້ທີ່ດີທີ່ສຸດຂອງຝ່າຍບໍລິ ຫານກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປະຈຸບັນ ເຊິ່ງການຄາດຄະເນນັ້ນອາດຈະແຕກແຕ່ງຈາກການຄາດຄະເນເບື້ອງຕົ້ນ.

ກໍາໄລ ແລະ ຂາດທຶນຈາກອັດຕາແລກປ່ຽນຈາກການແປງຄ່າ ຂອງລາຍການຊັບສິນ ແລະ ໜີ້ສິນການເງິນຂອງສະກຸນເງິນອື່ນແມ່ນບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ.

## 2.2 ການຕີມູນຄ່າເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ ໄດ້ຖືກຕີມູນຄ່າເປັນສະກຸນເງິນ (ກີບ) ດ້ວຍການນໍາໃຊ້ອັດຕາແລກປ່ຽນໃນມື້ລາຍການເກີດຂຶ້ນ.
ຊັບສິນ ແລະ ໜີ້ສິນການເງິນ ໃນມື້ໃບສະຫຼຸບຊັບສົມບັດ ທີ່ເປັນສະກຸນເງິນອື່ນແມ່ນໄດ້ຖືກປ່ຽນຄ່າເປັນສະກຸນເງິນກີບ ໂດຍນໍາໃຊ້ອັດຕາແລກປ່ຽນ ໃນມື້ຂອງໃບສະຫຼຸບຊັບສົມບັດ.

## 2.3 ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ ຮັບຮູ້ຕາມມູນຄ່າໃບເກັບເງິນຕົ້ນສະບັບ ແລະ ຕີມູນຄ່າຄືນໃໝ່ໃນມູນຄ່າຍັງເຫຼືອ ລົບ ຄ່າເຊື່ອມມູນຄ່າໜີ້ຕ້ອງຮັບ ບົນພື້ນຖານການທົບທວນຄືນຂອງມູນຄ່າເຫຼືອຕາມບັນຊີທ້າຍປີ, ຍົກເວັ້ນລູກໜີ້ຊາວສວນ. ຈໍານວນເງິນການຫັກເຊື່ອມມູນຄ່າ ແມ່ນສ່ວນຜິດດ່ຽງລະຫວ່າງ ມູນຄ່າຍັງເຫຼືອໃນບັນຊີຂອງໜີ້ຕ້ອງຮັບ ແລະ ຈໍານວນເງິນທີ່ຄາດວ່າຈະເກັບກູ້ຄືນໄດ້, ສໍາລັບໜີ້ສູນຕ້ອງສະສາງອອກຈາກບັນຊີໃນປີ ແລະ ຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບໃນສ່ວນຂອງຕົ້ນທຶນໃນການຂາຍ ແລະ ລາຍຈ່າຍບໍລິຫານ.

## 2.4 ສິນຄ້າໃນສາງ

ສິນຄ້າໃນສາງໄດ້ສະແດງໃນມູນຄ່າຕໍ່າກ່ວາຕົ້ນທຶນ ຫຼື ມູນຄ່າສຸດທິ ທີ່ຈະໄດ້ຮັບ, ຕົ້ນທຶນໄດ້ຖືກກໍານົດໂດຍຕົ້ນທຶນສະເລ່ຍທີ່ເກີດຂຶ້ນຈິງຂອງການຜະລິດທີ່ເກີດຂຶ້ນໃນປີ ໂດຍໃຊ້ວິທີ ເຂົ້າກ່ອນ ອອກກ່ອນ (“FIFO”). ຕົ້ນທຶນຂອງສິນຄ້າສໍາເລັດຮູບປະກອບມີ ວັດຖຸດິບທາງກົງ, ຄ່າແຮງງານທາງກົງ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວກັບການຜະລິດທາງກົງ, ຕົ້ນທຶນຂອງການຈັດຊື້ປະກອບມີສອງຢ່າງຄື: ລາຄາຊື້ ແລະ ລາຍຈ່າຍທາງກົງຂອງການໄດ້ມາຂອງສິນຄ້າໃນສາງເຊັ່ນ: ຄ່າພາສີນໍາເຂົ້າ ແລະ ຄ່າຂົນສົ່ງຫັກໃຫ້ສ່ວນຫລຸດ, ຄ່າເຜື່ອ ຫຼື ສ່ວນຫລຸດ. ມູນຄ່າສຸດທິທີ່ຈະໄດ້ຮັບແມ່ນປະເມີນລາຄາຂາຍໄດ້ຕາມປົກກະຕິຂອງທຸລະກິດ ຫັກລາຍຈ່າຍທີ່ສໍາເລັດ ແລະ ລາຍຈ່າຍໃນການຂາຍ. ຕັ້ງສໍາຮອງມູນຄ່າເຊື່ອມ ໃນກໍລະນີທີ່ຈໍາເປັນ ສໍາລັບສິນຄ້າທີ່ຫລ້າສະໄໝ, ເຄື່ອນໄຫວຊ້າ ແລະ ສິນຄ້າຄົງເຫຼືອທີ່ມີຂໍ້ຕໍານິ.

## 2.5 ວັດສະດຸສະໜອງ

ວັດສະດຸສະໜອງແມ່ນຖືກລະບຸໃນລາຄາຕົ້ນທຶນ ແລະ ກໍານົດໂດຍມີວິທີຕົ້ນທຶນສະເລ່ຍ. ຕົ້ນທຶນໃນການຊື້ປະກອບດ້ວຍລາຄາຊື້ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ໂດຍກົງກັບການໄດ້ມາຂອງສິນຄ້າເຊັ່ນ: ຄ່າພາສີຂາເຂົ້າ ແລະ ຄ່າຂົນສົ່ງ ຫັກສ່ວນລຸດຄ່າເຜື່ອ ຫຼື ສ່ວນລຸດທັງໝົດ. ຄ່າເຜື່ອມູນຄ່າເຊື່ອມແມ່ນຄິດໄລ່ເມື່ອເຫັນຈໍາເປັນສໍາລັບສິນຄ້າລ້າສະໄໝ, ການເຄື່ອນໄຫວຊ້າ ແລະ ເປເພ.

## 2.6 ຊັບສິນຄົງທີ່ມີຕົວຕົນ

ລາຍການຂອງຊັບສິນຄົງທີ່ມີຕົວຕົນ ໄດ້ຖືກບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມຫັກດ້ວຍຄ່າຫລຸ້ຍຫ້ຽນສະສົມ, ມູນຄ່າຕົ້ນທຶນເດີມປະກອບມີ ລາຍຈ່າຍທາງກົງ ຂອງການໄດ້ມາຂອງລາຍການຊັບສິນນັ້ນ. ລາຍຈ່າຍໃນເວລາຕໍ່ມາໄດ້ລວມເຂົ້າໃນມູນຄ່າຕາມບັນຊີຂອງຊັບສິນ ຫຼື ຮັບຮູ້ເປັນແຕ່ລະຊັບສິນແຍກຕ່າງຫາກ ຕາມຄວາມເໝາະສົມ, ເມື່ອມີຄວາມເປັນໄປໄດ້ວ່າຜົນປະໂຫຍດທາງເສດຖະກິດໃນອະນາຄົດທີ່ກ່ຽວຂ້ອງກັບລາຍການຊັບສິນດັ່ງກ່າວຈະກັບເຂົ້າສູ່ບໍລິສັດ ແລະ ຄ່າໃຊ້ຈ່າຍ ຂອງລາຍການນັ້ນສາມາດປະເມີນໄດ້ຢ່າງໜ້າເຊື່ອຖື.

ທີ່ດິນບໍ່ໄດ້ຄິດຄ່າຫລຸ້ຍຫ້ຽນ, ຄ່າຫລຸ້ຍຫ້ຽນແມ່ນໄດ້ຄິດໄລ່ເພື່ອຈະຕັດລາຍຈ່າຍຫັກມູນຄ່າຍັງເຫຼືອ ຂອງແຕ່ລະລາຍການຊັບສິນຕາມອາຍຸການໃຊ້ງານທີ່ໄດ້ຄາດຄະເນໂດຍການຄິດໄລ່ຄ່າຫລຸ້ຍຫ້ຽນບັນຫຼັກການ ການຄິດໄລ່ແບບຄົງຕົວ.

## 2.6 ຊັບສິນຄົງທີ່ມີຕົວຕົນ ( ຕໍ່ )

ປະເມີນອາຍຸການໃຊ້ງານ ຂອງແຕ່ລະປະເພດຂອງຊັບສິນດັ່ງຕໍ່ໄປນີ້:

| | ປີ |
|---|---|
| ອາຄານ ແລະ ໂຄງສ້າງພື້ນຖານ | 5-40 |
| ເຟີນີເຈີ້ ແລະ ອຸປະກອນ | 3-5 |
| ເຄື່ອງຈັກ ແລະ ອຸປະກອນ | 5-20 |
| ຍານພາຫະນະ | 3-5 |

ໃນກໍລະນີທີ່ມູນຄ່າຕາມບັນຊີຂອງຊັບສິນສູງກ່ວາມູນຄ່າທີ່ຄາດຄະເນວ່າຈະໄດ້ຮັບຄືນ ຈະບັນທຶກປັບລົງມູນຄ່າຕາມບັນຊີລົງທັນທີເປັນຈຳນວນທີ່ຈະຮັບຄືນ.

ຄ່າສ້ອມແປງ ແລະ ຄ່າບົວລະບັດຮັກສາ ໄດ້ຖືກຮັບຮູ້ ເຂົ້າໃນລາຍງານຜົນໄດ້ຮັບໃນປີການບັນຊີທີ່ເກີດຂຶ້ນຕົວຈິງ. ຄ່າໃຊ້ຈ່າຍໃນການສ້ອມແປງໃຫຍ່ເພີ່ມແມ່ນຈະເພີ່ມເຂົ້າໃນຍອດເຫລືອໃນບັນຊີຂອງຊັບສິນ ເມື່ອມີຄວາມເປັນໄປໄດ້ວ່າຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດ ໃນຈຳນວນທີ່ເກີນກວ່າມູນຄ່າເດີມຂອງຊັບສິນທີ່ມີຢູ່ໃນປັດຈຸບັນທີ່ຈະກັບເຂົ້າສູ່ບໍລິສັດ ຕົ້ນທຶນຄ່າສ້ອມແປງໃຫຍ່ຈະຖືກຫັກຄ່າຫລຸ້ຍຫ້ຽນຕາມອາຍຸການນຳໃຊ້ທີ່ຍັງເຫລືອຂອງຊັບສິນທີ່ກ່ຽວຂ້ອງ

ກຳໄລ ແລະ ການຂາດທຶນ ຈາກການຂາຍຊັບສິນຄົງທີ່ ໄດ້ມາຈາກການສົມທຽບລາຄາຂາຍ ກັບມູນຄ່າຕາມບັນຊີ ແລະ ລວມເຂົ້າໃນໃບລາຍງານໜ້າທີ.

## 2.7 ເຍື່ອນລໍຖ້າຕັດ ຕົ້ນທຶນການປູກຕົ້ນປາມ

ເຍື່ອນລໍຖ້າຕັດຕົ້ນທຶນໃນການປູກປາມແມ່ນຕົ້ນທຶນສະສົມໃນການປູກຕົ້ນປາມ ເຊິ່ງລວມມີຄ່າບຸກເບີກທີ່ດິນ ຄ່າແຮງງານ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງໂດຍກົງກັບການປູກຕົ້ນປາມ. ມູນຄ່າຂອງຕົ້ນປາມແມ່ນວັດໂດຍການເອົາຕົ້ນທຶນໃນການປູກທັງໝົດຫັກດ້ວຍມູນຄ່າຕັດຈອນສະສົມ ແລະ ຄ່າເຜື່ອສຳລັບການສູນເສຍຂອງຕົ້ນປາມ. ຕົ້ນປາມທີ່ພ້ອມໃຫ້ເກັບກ່ຽວຈະຖືກຕັດຈອນໄປເປັນຕົ້ນທຶນຂອງວັດຖຸດິບໃນການຜະລິດ ໂດຍອາຍຸການຕັດຈອນແມ່ນ 26ປີ ຕາມອາຍຸການທີ່ຄາດວ່າຈະໄດ້ຮັບຜົນປະໂຫຍດທາງເສດຖະກິດໂດຍນັບຈາກມື້ທີ່ພ້ອມໃຫ້ເກັບກ່ຽວ.

## 2.8 ເຍື່ອນຊຳລະຕົ້ນທຶນການປູກເບ້ຍຕົ້ນປາມ ສຳລັບຂາຍ

ເຍື່ອນຊຳລະຕົ້ນທຶນການປູກເບ້ຍຕົ້ນປາມແມ່ນສະແດງຢູ່ໃນໃບສະຫລຸບຊັບສົມບັດໃນຕົ້ນທຶນຫັກຄ່າເຜື່ອສະສົມສຳລັບຄ່າເຊື່ອມມູນຄ່າ, ຕົ້ນທຶນແມ່ນປະກອບມີທັງລາຄາຊື້ເບ້ຍຕົ້ນປາມ ແລະ ລາຍຈ່າຍໂດຍກົງຂອງການໄດ້ມາເບ້ຍເຊັ່ນ: ຄ່າພາສີນຳເຂົ້າ ແລະ ຄ່າຂົນສົ່ງ.

### 2.9 ການຮັບຮູ້ລາຍຮັບ

ລາຍຮັບປະກອບມີມູນຄ່າຍຸດຕິທຳ ຂອງສິ່ງທີ່ໄດ້ຮັບ ຫຼື ໜີ້ຕ້ອງຮັບຈາກການຂາຍສິນຄ້າ. ລາຍຮັບຈາກການຂາຍສິນຄ້າ ແມ່ນຮັບຮູ້ເມື່ອຄວາມສ່ຽງທີ່ເປັນສາລະສຳຄັນ ແລະ ຜົນຕອບແທນຂອງຄວາມເປັນເຈົ້າຂອງສິນຄ້າໄດ້ໂອນໃຫ້ກັບຜູ້ຊື້, ເຊິ່ງໂດຍທົ່ວໄປໃນເວລາທີ່ບໍລິສັດໄດ້ມອບສິນຄ້າໃຫ້ກັບລູກຄ້າຕາມໄລຍະການສົ່ງມອບ ແລະ ເງື່ອນໄຂທີ່ຕົກລົງກັນ.

### 2.10 ອາກອນລາຍໄດ້

ອາກອນລາຍໄດ້ແມ່ນໝາຍເຖິງອາກອນກຳໄລ ( ອາກອນລາຍໄດ້ບໍລິສັດ ) ສຳລັບປີ ກຳນົດໂດຍອີງຕາມກົດໝາຍສ່ວຍສາອາກອນ.

## 3 ການບໍລິຫານຄວາມສ່ຽງທາງດ້ານການເງິນ

### 3.1 ປັດໃຈຄວາມສ່ຽງທາງດ້ານການເງິນ

ກິດຈະກຳຂອງບໍລິສັດຈະປະເຊີນກັບຄວາມສ່ຽງ ປະເພດຕ່າງໆທາງດ້ານການເງິນລວມເຖິງຜົນກະ ທົບຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ. ຄວາມສ່ຽງດ້ານສິນເຊື່ອ ແລະ ຄວາມສ່ຽງດ້ານສະພາບຄ່ອງ. ຜູ້ບໍລິຫານສຸມໃສ່ໃນຄວາມບໍ່ແນ່ນອນທາງດ້ານການເງິນ ແລະ ພະຍາຍາມຫຼຸດຜ່ອນຜົນກະທົບທີ່ບໍ່ດີຕໍ່ຜົນການດຳເນີນງານດ້ານການເງິນຂອງບໍລິສັດ.

#### 3.1.1 ຄວາມສ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດ.

ບໍລິສັດໄດ້ມີການຊື້ສິນຄ້າສ່ວນຫຼາຍກັບຜູ້ສະໜອງຕ່າງປະເທດ ແລະ ເຮັດໃຫ້ປະເຊີນກັບຄວາມສ່ຽງດ້ານອັດຕາແລກປ່ຽນທີ່ອາດຈະເກີດຂຶ້ນຈາກ ສະກຸນເງິນຕາຕ່າງປະເທດຕ່າງໆ ໂດຍສະ ເພາະແມ່ນສະກຸນເງິນບາດ ແລະ ສະກຸນເງິນໂດລາ. ໃນວັນທີ 31 ມີນາ 2019. ຜູ້ບໍລິຫານບໍ່ໄດ້ນຳໃຊ້ເຄື່ອງມືທາງການເງິນ ມີມູນຄ່າຫຼາຍກ່ວາຜົນປະໂຫຍດໃນອະນາຄົນທີ່ສາມາດຄາດຄະ ເນໄດ້.

#### 3.1.2 ຄວາມສ່ຽວງທາງດ້ານສິນເຊື່ອ.

ບໍລິສັດ ບໍ່ມີຄວາມສ່ຽງດ້ານສິນເຊື່ອທີ່ເປັນສາລະສຳຄັນ ເພາະວ່າການຂາຍສິນຄ້າສ່ວນຫຼາຍຖືກສ້າງຂຶ້ນເປັນລາຍການເງິນສົດ ຫຼື ສິນເຊື່ອໄລຍະສັ້ນກັບລູກຄ້າຂາຍຍ່ອຍ. ເພາະສະນັ້ນຈຶ່ງບໍ່ມີຄວາມສ່ຽງໃນດ້ານສິນເຊື່ອ. ລາຍການເງິນສົດ ແລະ ເງິນຝາກທະນາຄານ ແມ່ນຈະປະຕິບັດກັບສະຖາບັນການເງິນທີ່ມີຄຸນນະພາບສູງເທົ່ານັ້ນ.

### 3.1.3 ຄວາມສ່ຽງທາງດ້ານສະພາບຄ່ອງ.

ຄວາມລະມັດລະວັງໃນການບໍລິຫານຄວາມສ່ຽງດ້ານສະພາບຄ່ອງໂດຍການຮັກສາລະດັບເງິນສົດໃຫ້ພຽງພໍເພື່ອຕອບສະໜອງຄວາມຕໍ່ເນື່ອງຂອງທຸລະກິດ ແລະ ການລົງທຶນໃນອະນາຄົດ ກ່ຽວກັບການຈະຫຍາຍກິດຈະການ. ຜູ້ບໍລິຫານຄາດຄະເນການຮັກສາລະດັບເງິນສົດ ເພື່ອຊ່ວຍໃນການຄຸ້ມຄອງສະພາບຄ່ອງ ແລະ ເພື່ອຮັບປະກັນວ່າມີເງິນສົດພຽງພໍທີ່ສາມາດຕອບສະໜອງຕາມແຜນຄວາມຕ້ອງການການລົງທຶນໃນໄລຍະສັ້ນ ແລະ ໄລຍະຍາວ.

## 4 ການຄຸ້ມຄອງຄວາມສ່ຽງຂອງທຶນໝູນວຽນ.

ວັດຖຸປະສົງຂອງບໍລິສັດ ໃນການຄຸ້ມຄອງທຶນໝູນວຽນແມ່ນເພື່ອຮັກສາຄວາມອາດສາມາດດໍາເນີນງານຢ່າງຕໍ່ເນື່ອງແນ່ໃສ່ການສົ່ງຄືນຜົນປະໂຫຍດໃຫ້ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ແລະ ສືບຕໍ່ຮັກສາ ໂຄງສ້າງຂອງທຶນ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍໃນເບື້ອງຂອງທຶນ.ເພື່ອທີ່ຈະຮັກສາ ຫຼືປັບປຸງໂຄງສ້າງຂອງທຶນ ໃຫ້ສະດວກໃນການດໍາເນີນງານ ແລະ ແຜນການລົງທຶນ ບໍລິສັດອາດຈະມີການກູ້ຢືມເງິນ, ອອກຮຸ້ນໃໝ່ແທນແຫຼ່ງທຶນເງິນກູ້ເກົ່າ ແລະ ດັດແກ້ຈໍານວນເງິນເປັນຜົນທີ່ຈະຈ່າຍໃຫ້ຜູ້ຖືຮຸ້ນໃນອະນາຄົດ.

## 5 ຊັບສິນຄົງທີ່ ມີຕົວຕົນ, ສຸດທິ

| | ທົບທວນຄືນ<br>ສໍາລັບໄລຍະ 3 ເດືອນສິ້ນສຸດ<br>ວັນທີ 31 ມີນາ 2019<br>ກີບ |
|---|---:|
| ຍອດຍົກມາ ສຸດທິ ໃນວັນທີ 01 ມັງກອນ 2019 ( ກວດສອບ ) | 20,280,020,977 |
| ເພີ່ມຂຶ້ນ | 2,215,223,501 |
| ຮັບເຂົ້າ/ຈ່າຍອອກ | (1,903,074,501) |
| ຄ່າຫຼຸ້ຍຫ້ຽນ | (440,496,695) |
| **ຍອດເຫຼືອທ້າຍງວດ ສຸດທິ ວັນທີ 31 ມີນາ 2019 ( ທົບທວນຄືນ )** | **20,151,673,282** |

## 6 ເງື່ອນລໍຖ້າຕັດຕົ້ນທຶນການປູກປາມ, ສຸດທິ

| | ທົບທວນຄືນ<br>ສຳລັບໄລຍະ 3 ເດືອນສິ້ນສຸດ<br>ວັນທີ 31 ມີນາ 2019<br>ກີບ |
|---|---|
| ຍອດຍົກມາ ສຸດທິ ໃນວັນທີ 01 ມັງກອນ 2019 ( ກວດສອບ ) | 22,507,458,490 |
| ເພີ່ມຂຶ້ນ | 251,929,441 |
| ຮັບເຂົ້າ/ຈ່າຍອອກ | |
| ຄ່າຫຼຸ້ຍຫ້ຽນ | (205,169,767) |
| **ຍອດເຫຼືອທ້າຍງວດ ສຸດທິ ວັນທີ 31 ມີນາ 2019 ( ທົບທວນຄືນ )** | **22,554,218,164** |

## 7 ເງິນກູ້ຢືມໄລຍະສັ້ນ

| | ທົບທວນຄືນ<br>ສຳລັບໄລຍະ 3 ເດືອນສິ້ນສຸດ<br>ວັນທີ 31 ມີນາ 2019<br>ກີບ |
|---|---|
| ຍອດຍົກມາ ສຸດທິ ໃນວັນທີ 01 ມັງກອນ 2019 ( ກວດສອບ ) | 426,674,640 |
| ເພີ່ມຂຶ້ນ | 929,148,300 |
| ຊຳລະຄືນ | |
| **ຍອດເຫຼືອທ້າຍງວດ ສຸດທິ ວັນທີ 31 ມີນາ 2019 ( ທົບທວນຄືນ )** | **1,355,822,940** |

ທາງບໍລິສັດໄດ້ມີການເຊັນສັນຍາກູ້ຢືມເງິນໄລຍະສັ້ນກັບທະນາຄານ ລາວ-ຫວຽດ ໃນອັດຕາດອກເບ້ຍ 9,5%ຕໍ່ປີ

## 8 ກຳໄລຕໍ່ຮຸ້ນ

ພື້ນຖານການຄິດໄລ່ກຳໄລຕໍ່ຮຸ້ນຄິດໄລ່ຈາກການແບ່ງກຳໄລໃຫ້ຜູ້ຖືຮຸ້ນດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນ

| | ທົບທວນຄືນ<br>ສຳລັບໄລຍະ 3 ເດືອນສິ້ນສຸດ<br>ວັນທີ 31 ມີນາ 2019<br>ກີບ |
|---|---:|
| ກຳໄລ/ຂາດທຶນ, ສຸດທິຂອງຜູ້ຖືຮຸ້ນ ( ກີບ ) | (215,144,271) |
| ຈຳນວນຮຸ້ນ ສະເລ່ນຕາມຮຸ້ນສາມັນ ( ຮຸ້ນ ) | 100,000,000 |
| ກຳໄລຕໍ່ຮຸ້ນ ( ກີບ ) | (2,15) |

## 9 ກະແສເງິນສົດຈາກກິດຈະກຳການດຳເນີນງານ

| | ທົບທວນຄືນ<br>ສຳລັບໄລຍະ 3 ເດືອນສິ້ນສຸດ<br>ວັນທີ 31 ມີນາ 2019<br>ກີບ |
|---|---:|
| ກຳໄລກ່ອນຫັກອາກອນ | (215,144,271) |
| ລາຍການປັບປຸງ | |
| ຄ່າຫຼຸ້ຍຫ້ຽນຂອງຊັບສິນບັດຄົງທີ່ມີຕົວຕົນ (ບົດອະທິບາຍ 5) | 440,496,695 |
| ຄ່າໃຊ້ຈ່າຍແບ່ງສ່ວນ ຂອງຊັບສິນຄົງທີ່ບໍ່ມີຕົວຕົນ(ບົດອະທິບາຍ 6) | 205,169,767 |
| ກຳໄລຈາກອັດຕາແລກປ່ຽນ | 70,706,337 |
| **ປ່ຽນແປງໃນທຶນໝູນວຽນ** | |
| ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ | (476,152,112) |
| ເຄື່ອງໃນສາງ | (1,519,973,146) |
| ວັດສະດຸສະໜອງ | (377,197,671) |
| ຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ | (296,394,498) |
| ຊັບສິນໝູນວຽນອື່ນໆ | (183,846,155) |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | 470,097,273 |
| ໜີ້ສິນໝູນວຽນອື່ນໆ | 66,276,500 |
| **ເງິນສົດຈາກການດຳເນີນກິດຈະກຳການດຳເນີນງານ** | **(1,815,961,281)** |